໖. ຈົວເນນຄຳ ກິນຂ້ອອຍ

# ໖. ຈົວເນນຄຳ ກິນຂ້ອອຍ

ຢູ່ໃນວັດບ່ອນຈົວຄຳຢູ່ນີ້ ມີຄຣູບາອາຈານຫລາຍອົງຢູ່ຮ່ວມກັນ, ໃນມື້ນຶ່ງ ມະຫາເຖນສາມອົງ ຄິດຢາກມີຜຍາປັນຍາເກັ່ງກ້າ ຈຶ່ງພາກັນໄປຊອກອ້ອຍມາໄດ້ ເຈັດລຳ ເພື່ອໃຫ້ອ້ອຍເກີດເປັນແຫລ່ງຜຍາປັນຍາ ຕ້ອງໄດ້ນຳເອົາໄປສູດຢູ່ປ່າຊ້າ ຈົນຮອດແຈ້ງ ຈຶ່ງຄ່ອຍກິນ ແລ້ວຜຍາປັນຍາກໍຈະເກີດມີຕາມຄວາມຕ້ອງການ, ມຫາເຖນທັງສາມອົງ ຈຶ່ງໄດ້ຊັກຊວນເອົາຈົວຄຳໄປນຳ ເພື່ອຊ່ວຍແບກອ້ອຍໄປສົ່ງເຖິງປ່າຊ້າ, ຝ່າຍຈົວຄຳບໍ່ຮູ້ຫລ່ຽມລິມຄົມໃນຂອງ ພວກມຫາເຖນ ກໍ ຈຶ່ງຕົກລົງຈະແບກອ້ອຍໄປໃຫ້ຕາງວ່າຊອກຄວາມຈິງຈາກມຫາເຖນທັງສາມອົງ.

ເມື່ອພວກມຫາເຖນ ກັບຈົວຄຳນຳເອົາອ້ອຍເຈັດລຳໄປເຖິງປ່າຊ້າ ຊຶ່ງຖືວ່າເປັນບ່ອນເຮັດບ່ອນຢຳແລ້ວ ກໍໄດ້ທຳພິທີຄັກແນ່ ມີການສູດຄາຖາເຂົ້າໃສ່ອ້ອຍຈົນເດິກດຶນທ່ຽງຄືນ, ຈາກນັ້ນພວກມຫາເຖນກໍອອກອຸບາຍກັບຈົວຄຳວ່າ ຈົວເອີຍ !! ເຈົ້າຈະພໍອົດຫລັບ ອົດນອນຮອດແຈ້ງໄດ້ບໍ ? ຊິໃຫ້ເຈົ້າເຝົ້າອ້ອຍນີ້ ພວກຂ້ອຍຈະພາກັນກັບ ຄືນເມືອວັດກ່ອນ, ໃຫ້ຈົວລໍຖ້າສຽງລະຄັງເດີ້ ເມື່ອໃດໄດ້ຍິນສຽງ ລະຄັງດັງແລ້ວໃຫ້ຟ້າວຖອດອ້ອຍອອກຈາກຄາຍທູດທັນທີ ແລ້ວແບກຄືນເມື່ອໄວ້ກຸຕິຫລັງແຈວັດ ມ້ຽນໃຫ້ດີໆ ຢ້ານຄົນຈະລັກກິນ ຈະເສັ່ຽຜຍາດີ, ຖ້າຈົວອົດນອນປະຕິບັດໄດ້ດີຈັ່ງວ່າມານີ້ ຈະແບ່ງປັນ ຜຍາໃຫ້ ຈົວຄຳໄດ້ຍິນແນວນັ້ນ ກໍຄິດຢາກໄດ້ຜຍາຕື່ມກັບຜຍາຂອງຕົນທີ່ມີຢູ່ແລ້ວ ຈຶ່ງຕົກລົງຮັບປາກປະຕິບັດຕາມ.

ຈົວຄຳອິດນອນຕລອດຄືນ, ຕື່ນມາກໍຟ້າວແບກອ້ອຍກັບມາ ແລະ ເອົາໄປໄວ້ກຸຕິ
ຫລັງແຈວັດ ຕາມທີ່ມຫາເຖນບອກ, ເມື່ອມ້ຽນອ້ອຍແລ້ວ ກໍຟ້າວໄປນອນ ເພາະວ່າອິດນອນໝົດຄືນ ;
ຝ່າຍຊຸມມຫາເຖນໄດ້ໂອກາດ ເມື່ອຈົວຄຳນອນຫລັບ ກໍຟ້າວພາກັນມາລັກກິນອ້ອຍທັງເຈັດລຳຈົນໝົດ
ຍັງແຕ່ຂໍ້ບ່ອນແຂງກິນບໍ່ໄດ້ຈຶ່ງຖິ້ມໄວ້ ເພື່ອໃຫ້ຈົວຄຳມ້ຽນ.

ຈົວຄຳນອນຕື່ນ ກໍມະໂງມະເງຊອກຫາອ້ອຍ
ປາກົດວ່າຍັງເຫລືອຢູ່ແຕ່ຂໍ້ປົນກັບຂີ້ອ້ອຍ ຈົວຄຳຮູ້ສຶກເສັ້ຽໃຈຫາອັນປຽບບໍ່ໄດ້
ເພາະຖືກຊຸມມຫາເຖນທັກຫລັງ. ຈົວຄຳອິດສາເກັບເອົາຂໍ້ອ້ອຍມາກິນ ທັງຈົ່ມທັງວ່າ
ອັນຄຣູບານີ້ກໍໂພດດອກ ບ່ອນໃດເປັນປ້ອງກໍພາກັນກິນໝົດ ເອົາແທ້ເອົາວ່າ
ເຫລືອແຕ່ຕາກັບຂໍ້ບ່ອນກິນບໍ່ໄດ້ເທົ່ານັ້ນ, ແຕ່ຄວາມຈິ່ງແລ້ວ ບ່ອນປ້ອງອ້ອຍບ່ອນຄຣູບາລັກກິນນັ້ນ
ບໍ່ມີຜຍາຂັງຢູ່ເລີຍ ຜຍາໄດ້ມາໂຮມຢູ່ຂໍ້ອ້ອຍໝົດ, ເມື່ອຈົວຄຳໄດ້ກິນຂໍ້ອ້ອຍ ກໍຈຶ່ງເກີດມີຜຍາປັນຍາ
ສລຽວສລາດວ່ອງໄວ ມີປະຕິພານໂວຫານອານເກ່ງກ້າ.

ອີກສາມມື້ຕໍ່ມາ ຈົວຄຳກໍເຂົ້າໄປໄຫວ້ ເພື່ອຖາມປັນຫາກັບພວກມຫາເຖນ
ໂດຍໄດ້ຕັ້ງເປັນກະທູ້ປນຫາຖາມດັ່ງນີ້ :

ເທດັ່ງວາ ແປວ່າຫຍັງ.. ?
ຊາໂຕ ແປວ່າຫຍັງ.. ?
ຄຸຊະລາຊີ່ຊວ່າ ແປວ່າຫຍັງ.. ?
ສິ່ງຄາວາ ແປວ່າຫຍັງ.. ?
ແປະໆຊ້ອນປະໆຢາຍຢາດ ແປວ່າຫຍັງ.. ?

ຄຳຖາມຂອງຈົວຄຳທັງໝົດນີ້ ຊຸມມຫາເຖນບໍ່ມີໃຜສາມາດຈະແປໄດ້ ຊອກຫາໃນໜັງສືກ້ອນໜັງສືມັດບ່ອນໃດກໍບໍ່ເຫັນຄຳຕອບ, ໃນທີ່ສຸດມຫາເຖນກໍພາກັນຍອມ ບໍ່ຮູ້ວ່າຈົວຄຳໄປໄດ້ຄຳຖາມມາແຕ່ໃສ ບ່ອນໃດ !! ເມື່ອເຫັນວ່າມຫາເຖນຕອບບໍ່ໄດ້ ຈົວຄຳຈຶ່ງຕອບໃຫ້ຮູ້ ທັງເວົ້າແບບອວດອ້າງມຫາເຖນວ່າ ອັນຂອງສ່ຳນີ້ຊິຄິດຍາກຄິດຊາຫຍັງ ຄຣູບາເອີຍ !

ຄວາມແປຂອງຈົວຄຳມີດັ່ງນີ້ :

ເທດັງວາ ແປວ່າງວງຊ້າງ

ຊາໂຕ ແປວ່າຄັນຄາກ

ຄຸຊະລາຊີຊວ່າ ແປວ່າຄຸຮ້າງຂີ້ຊີຊຸໝົດ

ສິງຄາວາ ແປວ່າງູສິງ

ແປະໆຊ້ອນປະໆຢາຍຢາດ ແປວ່າກອງຂີ້ຄວາຍ ມັນຂີ້ຢາຍ ໄປຕາມທົ່ງໄຮ່ທົ່ງນາ. ຝ່າຍມຫາເຖນ ເມື່ອໄດ້ຟັງຄຳຕອບຈາກຈົວຄຳແລ້ວກໍຄິດຄຽດຢູ່ໃນໃຈ ເພາະບໍ່ຄິດວ່າຈົວຄຳຈະເອົາຂອງໃກ້ໆ ຄຽງໆ ນີ້ມາຖາມ ,
ຄິດວ່າແມ່ນມັນມີຄວາມລຶກລັບຊັບຊ້ອນພິລຶກພິລ້ຳ. ເມື່ອຕອບໃຫ້ຮູ້ແລ້ວ ຈົວຄຳກໍລາກັບ ໄປ ອາບນ້ຳພັກຜ່ອນຢູ່ກຸຕິຂອງຕົນເອງຢ່າງສະບາຍ.

ອ່ານຕໍ່ເຣື່ອງ ທີ່ ສີ່ໃນເດືອນ ໜ້າ

໔, ພນັນກິນໝັ້ນຽງພໍ່ຄ້າຈີນໄດ້ຊື່ວ່າຊຽງໝັ້ນຽງ